## ການໃຫ້ໂອກາດເທົ່າທຽມກັນ ແມ່ນກົດໝາຍບ້ານເມືອງ

**ອົງການນີ້ໄດ້ຮັບເງິນຊ່ວຍເຫລືອຈາກຣັຖບານກາງ ເພາະສະນັ້ນກໍເປັນການລະເມີດຕໍ່ກົດໝາຍຖ້າອົງການນີ້ຫາກເລືອກປະຕິບັດເພາະເຫດຜົນຢ່າງໃດໜຶ່ງຕໍ່ໄປນີ້:**

ຖ້າເລືອກປະຕິບັດຕໍ່ບຸກຄົນໃດໃນສະຫະຣັຖອະເມຣິກາ, ໂດຍເຫດຜົນທາງເຊື້ອສາຍ, ສີຜິວ, ສາດສະໜາ, ເພດ, ສັນຊາດດັ້ງເດີມ, ອາຍຸ, ການເສັຍອົງຄະ, ພັກຫລືລັດທິການເມືອງ, ຫລື,
ຖ້າເລືອກປະຕິບັດຕໍ່ຄົນທີ່ຮັບຜົນປະໂຫຍດຈາກໂຄງການໃດຊຶ່ງໂຄງການນັ້ນຫາກຮັບເງິນຊ່ວຍເຫລືອຈາກຣັຖບານກາງພາຍໃຕ້ຫົວຂໍ້ 1 ຂອງກົດໝາຍວ່າດ້ວຍການລົງທຶນພັດທະນາແຮງງານ ປີ 1998 (WIA), ໂດຍເຫດຜົນວ່າ
ຄົນທີ່ຮັບຜົນປະໂຫຍດນັ້ນມີສັນຊາດຕ່າງດ້າວ/ສະຖານະຄົນເຂົ້າເມືອງໂດຍຖືກຕ້ອງຕາມກົດໝາຍທີ່ໄດ້ຮັບອະນຸຍາດເຮັດວຽກໃນສະຫະຣັຖ, ຫລືເປັນຄົນທີ່ເຂົ້າຮ່ວມໂຄງການຫລືກິດຈະກ າໃດໆທີ່ໄດ້ທຶນພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA.

**ຫ້າມອົງການທີ່ຮັບທຶນດັ່ງກ່າວຕ້ອງບໍ່ໃຫ້ເລືອກປະຕິບັດກ່ຽວກັບເລື່ອງໃດຕໍ່ໄປນີ້:**

ໃນການຕັດສິນໃຈຮັບຄົນ, ຫລືໃຫ້ໂອກາດຄົນ, ສ ່ໂຄງການຫລືກິດຈະກ າໃດໆທີ່ໄດ້ທຶນພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA;
ໃນການໃຫ້ໂອກາດໃນ, ຫລືການປະຕິບັດຕໍ່ບຸກຄົນໃດ, ກ່ຽວກັບໂຄງການຫລືກິດຈະກ າດັ່ງກ່າວ; ຫລື
ໃນການຕັດສິນໃຈກ່ຽວກັບການວ່າຈ້າງ ໃນການບ ຣິຫານ ຫລືທີ່ກ່ຽວຂ້ອງກັບ ໂຄງການຫລືກິດຈະກ າດັ່ງກ່າວ.

**ຄວນເຮັດຢ່າງໃດຖ້າທ່ານເຊື່ອວ່າທ່ານໄດ້ຖືກເລືອກປະຕິບັດ**

ຖ້າທ່ານຄິດວ່າທ່ານໄດ້ຖືກເລືອກປະຕິບັດຈາກໂຄງການຫລືກິດຈະກ າໃດໆທີ່ໄດ້ທຶນພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA, ທ່ານສາມາດຍື່ນຄ າຮ້ອງທຸກພາຍໃນ 180 ມື້
ນັບຕັ້ງແຕ່ວັນທີທີ່ທ່ານຫາວ່າໄດ້ຖືກເລືອກປະຕິບັດ, ໂດຍຍື່ນຕໍ່ໜຶ່ງໃນສອງບ່ອນຕໍ່ໄປນີ້:

ເຈົ້າໜ້າທີ່ກວດກາໂອກາດເທົ່າທຽມກັນຂອງອົງການທີ່ຮັບທຶນດັ່ງກ່າວ
(ຫລືບຸກຄົນທີ່ອົງການນັ້ນໄດ້ມອບໝາຍໃຫ້ເຮັດໜ້າທີ່ນີ້); ຫລື
ຜ ້ອ ານວຍການ, ສ ນກາງສິດທິພົລເມືອງ/Civil Rights Center (CRC), U.S. Department of Labor, 200 Constitution Avenue NW, Room N-4123, Washington, DC 20210.

ຖ້າທ່ານຍື່ນຄ າຮ້ອງທຸກໃຫ້ກັບອົງການທີ່ຮັບທຶນນັ້ນ, ທ່ານຈະຕ້ອງລ ຖ້າ
ກ)ຈົນອົງການນັ້ນອອກໜັງສືແຈ້ງການປະຕິບັດການສຸດທ້າຍ, ຫລື ຂ)ຈົນ 90 ມື້ໄດ້ຜ່ານໄປ
(ຂຶ້ນກັບວ່າໂຕໃດໄວກວ່າກັນ ກ ຫລື ຂ), ແລ້ວຈຶ່ງຍື່ນຄ າຮ້ອງທຸກໃຫ້ກັບ ສ ນກາງສິດທິພົລເມືອງ (CRC), U.S. Department of Labor, 200 Constitution Avenue NW, Room N-4123, Washington, DC 20210.

ຖ້າອົງການທີ່ຮັບທຶນນັ້ນບໍ່ອອກໜັງສືແຈ້ງການປະຕິບັດການສຸດທ້າຍໃຫ້ທ່ານພາຍໃນ 90 ມື້
ນັບຕັ້ງແຕ່ວັນທີທີ່ທ່ານໄດ້ຍື່ນຄ າຮ້ອງທຸກ, ທ່ານບໍ່ຕ້ອງລ ຖ້າຮັບໜັງສືແຈ້ງນັ້ນອີກ
ແຕ່ທ່ານຈະສາມາດຍື່ນຄ າຮ້ອງທຸກໃຫ້ກັບ CRC ໄດ້ແລ້ວ.

ແຕ່ວ່າ ທ່ານຈ າເປັນຕ້ອງຍື່ນຄ າຮ້ອງທຸກໃຫ້ກັບ CRC ບໍ່ເກີນ 30 ມື້ຫລັງຈາກເສັ້ນຕາຍວັນທີ 90 (ເວົ້າອີກວິທີໜຶ່ງ: ພາຍໃນ 120 ມື້ນັບຕັ້ງແຕ່ທ່ານໄດ້ຍື່ນຄ າຮ້ອງທຸກໃຫ້ກັບອົງການທີ່ຮັບທຶນນັ້ນ.)

ຖ້າກ ລະນີອົງການທີ່ຮັບທຶນນັ້ນຫາກອອກໜັງສືແຈ້ງການປະຕິບັດການສຸດທ້າຍກ່ຽວກັບຄ າຮ້ອງທຸກຂອງທ່ານ, ແຕ່ ທ່ານບໍ່ພ ໃຈກັບຄ າຕັດສິນຫລືຄ າຕອບຂອງອົງການ, ທ່ານຈະສາມາດຍື່ນຄ າຮ້ອງທຸກໃຫ້ກັບ CRC ໄດ້. ທ່ານຈ າເປັນ ຕ້ອງຍື່ນຄ າຮ້ອງທຸກໃຫ້ກັບ CRC ພາຍໃນ 30 ມື້ນັບຕັ້ງແຕ່ວັນທີທີ່ທ່ານໄດ້ຮັບໜັງສືແຈ້ງການປະຕິບັດການສຸດທ້າຍນັ້ນ.

ຜ ້ັຈັດການເລື່ອງໂອກາດເທົ່າທຽມກັນ/ຫ້ອງການທີ່ຣັຖອາຄັນຊ ມອບໝາຍໜ້າທີ່ກວດກາໂອກາດເທົ່າທຽມກັນ ກ່ຽວກັບ ທຶນ WIA ສ າລັບ ພະແນກບ ຣິການຄົນງານແຫ່ງຣັຖອາຄັນຊ ແມ່ນ:

Bernard Pighee
Arkansas Division of Workforce Services
P.O. Box 2981 Little Rock, Arkansas 72203-2981
ເລກໂທຣະສັບ: (501) 682-1418
Bernard.pighee@arkansas.gov

## ຄໍາຮັບຮອງ

ເພື່ອເປັນການປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂໃນການຮັບທຶນຊ່ວຍເຫລືອຈາກກະຊວງແຮງງານ (Department of Labor), ພາຍໃດຫົວຂໍ້ 1 ຂອງກົດໝາຍ WIA, ອົງການທີ່ສະໝັກຮັບທຶນນີ້ໃຫ້ຄ າຮັບຮອງວ່າຕົນຈະປະຕິບັດຕາມ ລະບຽບການທັງໝົດກ່ຽວກັບການບໍ່ໃຫ້ເລືອກປະຕິບັດແລະການໃຫ້ໂອກາດເທົ່າທຽມກັນ ຂອງປະມວນກົດໝາຍຕໍ່ໄປນີ້:

ຫົວຂໍ້ 6 ຂອງປະມວນກົດໝາຍວ່າດ້ວຍສິດທິພົລເມືອງ ປີ 1964
ມາດຕາ 504 ຂອງປະມວນກົດໝາຍວ່າດ້ວຍການຟື້ນຟ ຄົນພິການ ປີ 1973
ປະມວນກົດໝາຍວ່າດ້ວຍການເລືອກປະຕິບັດຄົນອາຍຸສ ງ ປີ 1975
ຫົວຂໍ້ 9 ຂອງບົດແກ້ໄຂປະມວນກົດໝາຍວ່າດ້ວຍການສຶກສາ ປີ 1972

## ນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ

ອຸປະກອນເສີມແລະບ ຣິການຕ່າງໆມີໃຫ້ບ ຣິການຕາມຄວາມຕ້ອງການໃຫ້ແກ່ຄົນເສັຍອົງຄະ.